ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 2208 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 25 ກັນຍາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງຊິງຊັ່ງ

- ອີງຕາມ ກົດໝາຍ ວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 3405/ກມວ, ລົງວັນທີ 29 ສິງຫາ 2025.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄຸ້ມຄອງຊິງຊັ່ງ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດມີຄວາມເປັນເອກະພາບ, ມີຄວາມໂປ່ງໃສ ແລະ ຍຸຕິທໍາ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດໍາເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ການຄຸ້ມຄອງຊິງຊັ່ງ**

ການຄຸ້ມຄອງຊິງຊັ່ງ ແມ່ນການຕິດຕາມ, ກວດກາ, ບັນທຶກຂໍ້ມູນ ກ່ຽວກັບການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊິງຊັ່ງ, ການຮັບຮອງຕົ້ນແບບຊິງຊັ່ງ, ການກວດທຽບ ແລະ ຂຶ້ນທະບຽນຊິງຊັ່ງ ທີ່ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ຊິງຊັ່ງ ຢູ່ ສປປ ລາວ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊິງຊັ່ງ** ໝາຍເຖິງ ອຸປະກອນວັດແທກຊະນິດໜຶ່ງ ທີ່ໃຊ້ສໍາລັບຊັ່ງວັດຖຸ ແລະ ສິ່ງຂອງຕ່າງໆ;
2. **ອຸປະກອນວັດແທກ** ໝາຍເຖິງ ເຄື່ອງມືເພື່ອດໍາເນີນການວັດແທກ ຊຶ່ງນໍາໃຊ້ວັດແທກດ້ວຍເຄື່ອງດຽວ ຫຼື ນໍາໃຊ້ກັບອຸປະກອນເສີມອື່ນໆ;

3. **ເຄື່ອງໝາຍຢັ້ງຢືນການກວດທຽບ** ໝາຍເຖິງ ສັນຍາລັກທີ່ໃຊ້ກັບຊິງຊັ່ງ ເພື່ອຢັ້ງຢືນເຖິງຄວາມຖືກຕ້ອງທີ່ຜ່ານການກວດກາແລ້ວ;

4. **ການຂຶ້ນທະບຽນຊິງຊັ່ງ** ໝາຍເຖິງ ການບັນທຶກ, ເກັບກຳຂໍ້ມູນທາງເຕັກນິກຂອງຊິງຊັ່ງ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ນຳໃຊ້ ຢູ່ ສປປ ລາວ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄຸ້ມຄອງຊິງຊັ່ງ ທຸກປະເພດ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດຂອງຊິງຊັ່ງ

### ມາດຕາ 5 ປະເພດຂອງຊິງຊັ່ງ

ຊິງຊັ່ງທີ່ນຳໃຊ້ຢູ່ ສປປ ລາວ ມີ ສອງ ປະເພດ ດັ່ງນີ້:

1. ຊິງຊັ່ງແບບອານາລ໋ອກ;
2. ຊິງຊັ່ງແບບດີຈິຕ໋ອນ.

### ມາດຕາ 6 ຊິງຊັ່ງແບບອານາລ໋ອກ

ຊິງຊັ່ງແບບອານາລ໋ອກ ແມ່ນຊິງຊັ່ງທີ່ບໍ່ໄດ້ນຳໃຊ້ໄຟຟ້າ ແຕ່ນຳໃຊ້ແບບເຂັມໂມງທີ່ເປັນຕົວຊີ້ບອກນ້ຳໜັກ ທີ່ມີສ່ວນປະກອບ ຄື: ເຮືອນຊິງ, ໜ້າຊິງ, ຜາງຊິງ, ເຂັມຊິງ, ບ່ອນຕັ້ງສູນ, ຕົວເລກຊີ້ບອກນ້ຳໜັກ, ລູກດຶງຕັ້ງຄວາມທ່ຽງ, ລ໋ອກປັບຊິງ ແລະ ສະປິງ.

### ມາດຕາ 7 ຊິງຊັ່ງແບບດີຈິຕ໋ອນ

ຊິງຊັ່ງແບບດີຈິຕ໋ອນ ແມ່ນຊິງຊັ່ງທີ່ໃຊ້ໄຟຟ້າ ຊຶ່ງສະແດງນ້ຳໜັກເປັນຕົວເລກ ທີ່ມີສ່ວນປະກອບ ຄື: ເຮືອນຊິງ, ໜ້າຈໍສະແດງຜົນ, ໂລດເຊລ, ຜາງຊິງ, ບ່ອນປັບຕົວເລກ, ແຜ່ນວົງຈອນໄຟຟ້າ, ບ່ອນປັບນ້ຳທ່ຽງ ແລະ ບ່ອນຕັ້ງສູນ.

## ໝວດທີ 3
## ຂັ້ນຄວາມຊັດເຈນ, ຄ່າຜິດດ່ຽງແລະ ສະຫຼາກ ຂອງຊິງຊັ່ງ

### ມາດຕາ 8 ຂັ້ນຄວາມຊັດເຈນຂອງຊິງຊັ່ງ

ຂັ້ນຄວາມຊັດເຈນຂອງຊິງຊັ່ງ ມີຄື: ຊິງຊັ່ງຂັ້ນໜຶ່ງ (I), ຊິງຊັ່ງຂັ້ນສອງ (II), ຊິງຊັ່ງຂັ້ນສາມ (III) ແລະ ຊິງຊັ່ງຂັ້ນສີ່ (IIII).

ລາຍລະອຽດດັ່ງນີ້:

| ຂັ້ນຄວາມທ່ຽງ | ຄ່າການເຕັ້ນຂອງຊິງຊັ່ງ e | ການຊອກຫາຂັ້ນຂອງຊິງຊັ່ງ (n = Max/e) | | ຄ່າການຊັ່ງຕ່ຳສຸດ (Min) |
|---|---|---|---|---|
| | | ຈຳນວນຕ່ຳສຸດ | ຈຳນວນສູງສຸດ | |
| ຂັ້ນໜຶ່ງ (I) | (0.001 kg ≤ e) (*) | 50,000 (**) | - | 100 e |
| ຂັ້ນສອງ (II) | (0.001 kg ≤ e ≤ 0.05 kg)<br>(0.1 kg ≤ e) | 100<br>5,000 | 100,000<br>100,000 | 20 e<br>50 e |
| ຂັ້ນສາມ (III) | (0.1 kg ≤ e ≤ 2 kg)<br>(5 kg ≤ e) | 100<br>500 | 10,000<br>10,000 | 20 e<br>20 e |
| ຂັ້ນສີ່ (IIII) | (5 kg ≤ e) | 100 | 1,000 | 10 e |

**ມາດຕາ 9 ຄ່າຜິດດ່ຽງອະນຸຍາດ**

ຄ່າຜິດດ່ຽງອະນຸຍາດ ແມ່ນຄ່າຜິດພາດທີ່ສາມາດອະນຸຍາດໃຫ້ໄດ້ສູງສຸດໃນການກວດທຽບ. ສໍາລັບຄ່າຜິດດ່ຽງອະນຸຍາດຂອງຊິງຊັ່ງ ໃນການກວດສອບເພື່ອຮັບຮອງຕົ້ນແບບ ແລະ ຂຶ້ນທະບຽນໃໝ່ ໃຫ້ອີງຕາມລະບຽບການຂອງອົງການວັດແທກທາງດ້ານກົດໝາຍສາກົນ (International Organization of Legal Metrology, OIML R-76 ລາຍລະອຽດດັ່ງນີ້:

| **ຄ່າອະນຸຍາດຜິດດ່ຽງ** | **ຊອກຫາຄ່າຂອງ m*** | | | |
|---|---|---|---|---|
| | **ຂັ້ນໜຶ່ງ (I)** | **ຂັ້ນສອງ (II)** | **ຂັ້ນສາມ (III)** | **ຂັ້ນສີ່ (IIII)** |
| ±0.5 e | (0≤ m ≤ 50,000) | (0≤ m ≤ 5,000) | (0≤ m ≤ 500) | (0≤ m ≤ 50) |
| ±1.0 e | (50,000< m ≤ 200,000) | (5,000< m ≤ 20,000) | (500< m ≤ 2,000) | (50< m ≤ 200) |
| ±1.5 e | (200,000 < m) | (20,000<m≤1,000,000) | (2,000<m≤ 10,000) | (200 < m ≤ 1,000) |

* m ແມ່ນຄ່າທີ່ໄດ້ມາຈາກນໍ້າໜັກທີ່ໃຊ້ໃນການກວດທຽບ ຫານໃຫ້ ຄ່າການເຕັ້ນ e ຂອງຊິງຊັ່ງ.

ສໍາລັບຄ່າຜິດດ່ຽງອະນຸຍາດຂອງຊິງຊັ່ງທີ່ກວດສອບໃນພາກສະໜາມ ຫຼື ກວດສອບເປັນຄັ້ງທີ ສອງ ໃຫ້ຄູນ 2 ເທົ່າ.

**ມາດຕາ 10 ສະຫຼາກ**

ຊິງຊັ່ງທຸກຊະນິດ ທີ່ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ຊິງຊັ່ງ ຢູ່ ສປປ ລາວ ຕ້ອງມີສະຫຼາກ, ຈໍສະແດງຜົນ ແລະ ປຸ່ມຕັ້ງຄ່າ ທີ່ເປັນພາສາລາວ ຫຼື ພາສາອັງກິດ ເພື່ອແຈ້ງຂໍ້ມູນຕ່າງໆ ກ່ຽວກັບຊິງຊັ່ງ, ການລະບຸຂໍ້ຄວາມໃນສະຫຼາກ ຕ້ອງຊັດເຈນ, ອ່ານງ່າຍ, ເຂົ້າໃຈແຈ້ງ ແລະ ບໍ່ສາມາດລຶບໄດ້ ຊຶ່ງມີເນື້ອໃນ ດັ່ງນີ້:

1. ຊື່ຂອງຜູ້ຜະລິດ ຫຼື ເຄື່ອງໝາຍການຄ້າ;
2. ຊື່ ແລະ ທີ່ຢູ່ຂອງໂຮງງານຜະລິດ ຫຼື ບໍລິສັດ ຜູ້ຜະລິດ, ປະກອບ , ຕົວແທນນໍາເຂົ້າ ຫຼື ຈໍາໜ່າຍ;
3. ເລກໝາຍປະຈໍາເຄື່ອງ;
4. ຍີ່ຫໍ້ ຫຼື ລຸ້ນ;
5. ຂໍ້ແນະນໍາວິທີການນໍາໃຊ້;
6. ປີຜະລິດ;
7. ຈຸດອ່ານຊີ້ບອກນໍ້າໜັກທີ່ຊັ່ງໄດ້;
8. ຄ່າຄວາມຊັດເຈນການອ່ານລະອຽດຂອງຊິງຊັ່ງ e ຫຼື d;
9. ຄວາມສາມາດຊັ່ງໄດ້ສູງສຸດ ແລະ ຕໍ່າສຸດ;
10. ກາໝາຍຢັ້ງຢືນເຖິງຄວາມຖືກຕ້ອງຂອງຊິງຊັ່ງ.

ສໍາລັບ ສະຫຼາກທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ຮັບການແປ ແລະ ມີເນື້ອໃນສອດຄ່ອງກັບພາສາລາວ.

**ມາດຕາ 11 ບ່ອນລ໋ອກຊີນ**

ບ່ອນລ໋ອກຊີນ ແມ່ນບ່ອນທີ່ໃຊ້ສໍາລັບໜີບຊີນ ເພື່ອປ້ອງກັນການປ່ຽນແປງ, ດັດແກ້, ຖອດຖອນສ່ວນໃດສ່ວນໜຶ່ງ ຫຼື ຫຼາຍສ່ວນອອກ ທີ່ມີຜົນຕໍ່ຄວາມຖືກຕ້ອງຂອງຄ່ານໍ້າໜັກຕົວຈິງ.

ສໍາລັບຊິງຊັ່ງທຸກຊະນິດ ທີ່ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ຊິງຊັ່ງ ຢູ່ ສປປ ລາວ ຕ້ອງມີບ່ອນສໍາລັບລ໋ອກຊີນ.

## ໝວດທີ 4
## ການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ

**ມາດຕາ 12 ການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ທີ່ດໍາເນີນການຜະລິດ, ນໍາເຂົ້າ, ສົ່ງອອກ, ບໍລິການກວດທຽບ, ຕິດຕັ້ງ ແລະ ສ້ອມແປງ ກ່ຽວກັບຊີງຊັ່ງ ຕ້ອງໄດ້ຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ຈາກກົມມາດຕະຖານ ແລະ ວັດແທກ.

**ມາດຕາ 13 ເງື່ອນໄຂການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ການຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຫ້ອງການ ຫຼື ສະຖານທີ່ບໍລິການຄົງທີ່;
2. ມີພະນັກງານວິຊາການທີ່ມີຄວາມຮູ້ ກ່ຽວກັບຊີງຊັ່ງ ໃນຈໍານວນທີ່ເໝາະສົມ;
3. ມີໃບຢັ້ງຢືນຄວາມສາມາດ ແລະ ປະສົບການ ກ່ຽວກັບດ້ານເຕັກນິກວິຊາສະເພາະ;
4. ມີເຄື່ອງມືວັດແທກ ໃຊ້ສໍາລັບກວດທຽບຄວາມຖືກຕ້ອງຂອງຊີງຊັ່ງ.

**ມາດຕາ 14 ການສະເໜີຂໍຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ໃຫ້ຍື່ນຄໍາຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ສໍາເນົາໃບຢັ້ງຢືນດໍາເນີນກິດຈະການໂຮງງານ (ສໍາລັບຜູ້ຜະລິດ);
4. ສໍາເນົາໃບລົງທະບຽນເປັນບໍລິສັດຜູ້ນໍາເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ (ສໍາລັບຜູ້ນໍາເຂົ້າ);
5. ໃບມອບສິດຈາກບໍລິສັດແມ່ ໃນກໍລະນີທີ່ເປັນຕົວແທນ (ສໍາລັບຜູ້ນໍາເຂົ້າ);
6. ລາຍການ ແລະ ຂໍ້ມູນດ້ານເຕັກນິກຂອງຊີງຊັ່ງ.

**ມາດຕາ 15 ການພິຈາລະນາອອກໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງຄົບຖ້ວນ ຕາມທີ່ກໍານົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຕ້ອງພິຈາລະນາອອກໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ພາຍໃນ ສິບຫ້າ ວັນລັດຖະການ.

ກໍລະນີ ເອກະສານບໍ່ຖືກຕ້ອງບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງຊາບພາຍໃນ ສາມ ວັນລັດຖະການ ເພື່ອປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄໍາຮ້ອງຊາບ.

**ມາດຕາ 16 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ໃຫ້ຍື່ນຄໍາຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ພາຍໃນ ສາມສິບວັນ ກ່ອນໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ຈະໝົດອາຍຸນໍາໃຊ້ ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ສະບັບຕົ້ນ.

**ມາດຕາ 17 ການໂຈະໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ຈະຖືກໂຈະ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ກ່ອນການໂຈະກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;

2. ນໍາໃຊ້ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ທີ່ໝົດອາຍຸ.

**ມາດຕາ 18 ການຍົກເລີກໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ຈະຖືກຍົກເລີກ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີຍົກເລີກດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ກ່ອນການຍົກເລີກກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;

2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ແລະ ຍັງສືບຕໍ່ເຄື່ອນໄຫວດໍາເນີນກິດຈະການໃນເວລາຖືກສັ່ງໂຈະ;

3. ຜູ້ປະກອບການບໍ່ຕໍ່ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ ພາຍຫຼັງໝົດອາຍຸ ພາຍໃນ ສາມສິບ ວັນ;

4. ມີຄໍາຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດໍາເນີນກິດຈະການ.

## ໝວດທີ 5
## ການຮັບຮອງຕົ້ນແບບຊີງຊັ່ງ

**ມາດຕາ 19 ຕົ້ນແບບຊີງຊັ່ງ**

ຕົ້ນແບບຊີງຊັ່ງ ແມ່ນຕົ້ນແບບຕົວຢ່າງຊີງຊັ່ງ ທີ່ສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ ກ່ອນການຜະລິດ ຫຼື ນໍາເຂົ້າຊີງຊັ່ງ.

**ມາດຕາ 20 ວິທີການຮັບຮອງຕົ້ນແບບຊີງຊັ່ງ**

ການຮັບຮອງຕົ້ນແບບຊີງຊັ່ງ ມີ ສາມ ວິທີ ດັ່ງນີ້:

1. ການຮັບຮອງດ້ວຍການທົດສອບຕົ້ນແບບຊີງຊັ່ງ ຕາມລະບຽບເຕັກນິກ;
2. ການຮັບຮອງດ້ວຍການໄປທົດສອບຕົ້ນແບບຊີງຊັ່ງ ຢູ່ໂຮງງານຜູ້ຜະລິດ;
3. ການຮັບຮອງດ້ວຍລະບົບເອກະສານການຮັບຮອງຕົ້ນແບບຊີງຊັ່ງ ຈາກຕົ້ນທາງ.

**ມາດຕາ 21 ການສະເໜີຂໍການຮັບຮອງຕົ້ນແບບຊີງຊັ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສະເໜີຂໍການຮັບຮອງຕົ້ນແບບຊີງຊັ່ງ ໃຫ້ຍື່ນຄໍາຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ສໍາເນົາໃບເສຍອາກອນ ປະຈໍາປີ;
4. ຕົ້ນແບບຂອງຊີງຊັ່ງ;
5. ຂໍ້ມູນຕ່າງໆຂອງຕົ້ນແບບຊີງຊັ່ງ;
6. ໃບຮັບຮອງຕົ້ນແບບຊີງຊັ່ງ ຈາກປະເທດຕົ້ນທາງ ອອກໂດຍໜ່ວຍງານຂອງລັດຖະບານ ສໍາລັບການນໍາເຂົ້າຕົ້ນແບບຊີງຊັ່ງ;
7. ເອົາຕົວຢ່າງຕົ້ນແບບຂອງຊີງຊັ່ງ ແຕ່ລະຍີ່ຫໍ້, ລຸ້ນ ເພື່ອມາກວດທຽບ.

**ມາດຕາ 22 ການພິຈາລະນາຮັບຮອງຕົ້ນແບບຊີງຊັ່ງ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຕ້ອງດຳເນີນການທົດສອບຕົ້ນແບບຊີງຊັ່ງ ຖ້າຫາກເຫັນວ່າຜົນການທົດສອບຕົ້ນແບບຊີງຊັ່ງ ຖືກຕ້ອງສອດຄ່ອງກັບລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ, ກົມມາດຕະຖານ ແລະ ວັດແທກ ຕ້ອງອອກໃບຮັບຮອງຕົ້ນແບບຊີງຊັ່ງ ກ່ອນການຜະລິດ ແລະ ນຳເຂົ້າ ຢູ່ ສປປ ລາວ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີ ບໍ່ສາມາດອອກໃບຮອບຮອງຕົ້ນແບບຊີງຊັ່ງ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນຄຳຮ້ອງຮັບຊາບ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 23 ການຮັບຮອງຕົ້ນແບບຊີງຊັ່ງ**

ການຮັບຮອງຕົ້ນແບບຊີງຊັ່ງ ແມ່ນເອກະສານຢັ້ງຢືນຜົນການທົດສອບຕົ້ນແບບຊີງຊັ່ງ ກ່ອນການຜະລິດ ຫຼື ນຳເຂົ້າຊີງຊັ່ງ ຢູ່ ສປປ ລາວ ທີ່ຜ່ານການກວດທຽບທີ່ສອດຄ່ອງຕາມເກນມາດຕະຖານເຕັກນິກຈາກກົມມາດຕະຖານ ແລະ ວັດແທກ ເພື່ອອອກໃບຢັ້ງຢືນຮັບຮອງຕົ້ນແບບຊີງຊັ່ງ.

ໃບຮັບຮອງຕົ້ນແບບຊີງຊັ່ງ ມີອາຍຸນຳໃຊ້ ຫ້າ ປີ ແລະ ສາມາດຕໍ່ໄດ້ເທື່ອລະສອງ ປີ, ໂດຍໃຫ້ຍື່ນຄຳຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ຕາມທີ່ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 24 ການຕິດກາໝາຍຮັບຮອງຕົ້ນແບບຊີງຊັ່ງ**

ຕົ້ນແບບຊີງຊັ່ງ ທີ່ຜ່ານການຮັບຮອງຕົ້ນແບບສຳເລັດ ຕ້ອງໄດ້ຮັບການຕິດກາໝາຍຮັບຮອງຕົ້ນແບບຊີງຊັ່ງໃນເວລາຜະລິດ ຫຼື ນຳເຂົ້າຊີງຊັ່ງສຳເລັດ ຈາກກົມມາດຕະຖານ ແລະ ວັດແທກກ່ອນ ຈຶ່ງສາມາດນຳໃຊ້ ຫຼື ຈຳໜ່າຍ.

## ໝວດທີ 6
## ການສະເໜີຂໍກວດທຽບ ແລະ ການຂຶ້ນທະບຽນຊີງຊັ່ງ

**ມາດຕາ 25 ປະເພດການກວດທຽບຊີງຊັ່ງ**

ການກວດທຽບ ຊີງຊັ່ງ ມີ ສອງ ປະເພດ ດັ່ງນີ້:

1. ການກວດທຽບ ເພື່ອຂຶ້ນທະບຽນຊີງຊັ່ງ ທີ່ຜະລິດ ຫຼື ນຳເຂົ້າ;
2. ການກວດທຽບຄືນ ຫຼັງການຕິດຕັ້ງ ແລະ ນຳໃຊ້ຊີງຊັ່ງທາງການຄ້າ.

**ມາດຕາ 26 ການສະເໜີຂໍການກວດທຽບຊີງຊັ່ງ**

ການສະເໜີຂໍການກວດທຽບ ແລະ ການຂຶ້ນທະບຽນຊີງຊັ່ງ ທີ່ການຜະລິດ, ນຳເຂົ້າ ແລະ ຫຼັງການຕິດຕັ້ງ ແລະ ນຳໃຊ້ຊີງຊັ່ງ ຕ້ອງສະເໜີຫາກົມມາດຕະຖານ ແລະ ວັດແທກ ເພື່ອກວດທຽບຄວາມຖືກຕ້ອງ, ຊັດເຈນ ແລະ ສອດຄ່ອງຕາມຕົ້ນແບບຊີງຊັ່ງ ໂດຍປະກອບເອກະສານ ດັ່ງນີ້:

**ການກວດທຽບ ເພື່ອຂຶ້ນທະບຽນຊີງຊັ່ງ ທີ່ຜະລິດ ຫຼື ນຳເຂົ້າ ຕ້ອງປະກອບເອກະສານດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊີງຊັ່ງ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບອະນຸຍາດນຳເຂົ້າ ແລະ ສົ່ງອອກຊີງຊັ່ງ;
5. ສຳເນົາໃບຮັບຮອງຕົ້ນແບບ;
6. ລາຍການຊີງຊັ່ງທີ່ຜະລິດ ຫຼື ນຳເຂົ້າ.

**ການກວດທຽບ ຫຼັງການຕິດຕັ້ງ ແລະ ນຳໃຊ້ຊິງຊັ່ງ ຕ້ອງປະກອບເອກະສານ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊິງຊັ່ງ;
3. ສຳເນົາໃບຢັ້ງຢືນການກວດທຽບຊິງຊັ່ງ;
4. ສຳເນົາໃບຂຶ້ນທະບຽນຊິງຊັ່ງ.

**ມາດຕາ 27 ການສຸ່ມຕົວຢ່າງຊິງຊັ່ງມາກວດທຽບຊິງຊັ່ງ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດຢູ່ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຕ້ອງແຕ່ງຕັ້ງພະນັກງານ ເພື່ອໄປສຸ່ມເອົາຕົວຢ່າງຂອງຊິງຊັ່ງ ທີ່ຜະລິດ, ນຳເຂົ້າ ຫຼື ຊິງຊັ່ງທີ່ໄດ້ຕິດຕັ້ງ ແລະ ນຳໃຊ້ໄປແລ້ວ ເພື່ອນຳມາກວດທຽບຄວາມຖືກຕ້ອງ ແລະ ປະເມີນຄວາມສອດຄ່ອງຕາມຕົ້ນແບບຊິງຊັ່ງທີ່ໄດ້ຮັບການຮັບຮອງ.

**ມາດຕາ 28 ການຂຶ້ນທະບຽນຊິງຊັ່ງ**

ພາຍຫຼັງທີ່ດຳເນີນການກວດທຽບຕົວຢ່າງຊິງຊັ່ງ ທີ່ຜະລິດ ແລະ ນຳເຂົ້າ ຕາມລະບຽບເຕັກນິກຂອງ OIML R-76, ຖ້າຫາກຜົນການກວດທຽບຕົວຢ່າງຊິງຊັ່ງ ຖືກຕ້ອງສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ ແລະ ຜົນການຮັບຮອງຕົ້ນແບບຊິງຊັ່ງ, ກົມມາດຕະຖານ ແລະ ວັດແທກ ຕ້ອງອອກໃບຢັ້ງຢືນຂຶ້ນທະບຽນຊິງຊັ່ງ. ພ້ອມທັງໃສ່ຊີນລ໋ອກ ທີ່ມີເຄື່ອງໝາຍສະເພາະ ແລະ ເຄື່ອງໝາຍຢັ້ງຢືນການກວດທຽບໃສ່ຊິງຊັ່ງ ໃຫ້ຄົບທຸກໜ່ວຍ.

ຖ້າຫາກຜົນການກວດທຽບຊິງຊັ່ງ ບໍ່ຖືກຕ້ອງສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ ແລະ ຕາມຕົ້ນແບບຊິງຊັ່ງທີ່ໄດ້ຮັບຮອງໄວ້ ຖືວ່າບໍ່ສາມາດອອກໃບຢັ້ງຢືນຂຶ້ນທະບຽນຊິງຊັ່ງ ແລະ ສະເໜີໃຫ້ຜູ້ຜະລິດ ຫຼື ຜູ້ນຳເຂົ້າຊິງຊັ່ງ ເພື່ອປັບປຸງຄືນໃໝ່, ພາຍຫຼັງປັບປຸງແລ້ວ ຈຶ່ງສະເໜີຫາກົມມາດຕະຖານ ແລະ ວັດແທກ ເພື່ອກວດທຽບຊິງຊັ່ງຄືນ ແລະ ຂຶ້ນທະບຽນຊິງຊັ່ງ ຕາມລະບຽບການ.

**ມາດຕາ 29 ອາຍຸໃບຢັ້ງຢືນຂຶ້ນທະບຽນ ແລະ ກວດທຽບຊິງຊັ່ງ.**

ໃບຢັ້ງຢືນຂຶ້ນທະບຽນຊິງຊັ່ງ ອອກໃຫ້ເທື່ອດຽວ ໂດຍບໍ່ມີກຳນົດອາຍຸການໃຊ້ງານ. ສຳລັບອາຍຸໃບຢັ້ງຢືນການກວດທຽບຊິງຊັ່ງ ທຸກປະເພດ ມີອາຍຸ ໜຶ່ງ ປີ.

**ມາດຕາ 30 ການກວດທຽບຊິງຊັ່ງ ຫຼັງການຕິດຕັ້ງ ແລະ ນຳໃຊ້ທາງການຄ້າ**

ພາຍຫຼັງໄດ້ຮັບເອກະສານຂໍກວດທຽບຊິງຊັ່ງຫຼັງຕິດຕັ້ງ ແລະ ນຳໃຊ້ທາງການຄ້າ ຄົບຖ້ວນ ແລະ ຖືກຕ້ອງ, ກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕ້ອງແຕ່ງຕັ້ງເຈົ້າໜ້າທີ່ ເພື່ອໄປກວດທຽບຄວາມຖືກຕ້ອງຊັດເຈນຊິງຊັ່ງ ຕາມການແບ່ງຂັ້ນຄຸ້ມຄອງ.

ຖ້າຫາກຜົນການກວດທຽບຊິງຊັ່ງ ຫາກສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ, ກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕ້ອງອອກໃບຢັ້ງຢືນການກວດທຽບຊິງຊັ່ງ ພາຍໃນ ຫ້າວັນ ນັບແຕ່ວັນໄດ້ຮັບຜົນການກວດທຽບຊິງຊັ່ງ, ພ້ອມທັງໃສ່ຊີນລ໋ອກ ທີ່ມີເຄື່ອງໝາຍສະເພາະ ແລະ ເຄື່ອງໝາຍຢັ້ງຢືນການກວດທຽບໃສ່ຊິງຊັ່ງ ໃຫ້ຄົບທຸກໜ່ວຍ.

ຖ້າຜົນການກວດທຽບບໍ່ສອດຄ່ອງຕາມລະບຽບເຕັກນິກທີ່ກຳນົດ ຫຼື ຕາມຕົ້ນແບບຊິງຊັ່ງ ທີ່ໄດ້ຮັບຮອງໄວ້ ບໍ່ສາມາດອອກໃບຢັ້ງຢືນການກວດທຽບຊິງຊັ່ງ ແລະ ສະເໜີໃຫ້ປັບປຸງຄືນ. ພາຍຫຼັງປັບປຸງແລ້ວ ຈຶ່ງສະເໜີຫາກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ພິຈາລະນາກວດທຽບຊິງຊັ່ງຄືນ.

## ໝວດທີ 7
## ຮູບແບບ ແລະ ຫຼັກການການກວດທຽບ ແລະ ການຂຶ້ນທະບຽນຊີງຊັ່ງ

**ມາດຕາ 31 ຮູບແບບການກວດທຽບຊີງຊັ່ງ**

ຮູບແບບການກວດທຽບ ປະກອບມີ ສາມ ຮູບແບບ ດັ່ງນີ້:

1. ການກວດທຽບຊີງຊັ່ງ ແບບປົກກະຕິ ໜຶ່ງປີ ຕໍ່ຄັ້ງ ເປັນການກວດທຽບ ຕາມແຜນກຳນົດເວລາອັນແນ່ນອນ;

2. ການກວດທຽບຊີງຊັ່ງ ແບບມີການແຈ້ງໃຫ້ຮູ້ລ່ວງໜ້າ ເປັນການກວດທຽບນອກແຜນ ທີ່ມີຄວາມຈຳເປັນ, ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດທຽບຊີງຊັ່ງ ຮັບຮູ້ລ່ວງໜ້າ;

3. ການກວດທຽບຊີງຊັ່ງ ແບບກະທັນຫັນ ເປັນການກວດທຽບແບບຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດທຽບຊີງຊັ່ງຮູ້ລ່ວງໜ້າ.

**ມາດຕາ 32 ຫຼັກການຈັດຕັ້ງປະຕິບັດການກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ**

ຫຼັກການປະຕິບັດການກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ໃຫ້ປະຕິບັດ ດັ່ງນີ້:

1. ການດຳເນີນການກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ເຈົ້າໜ້າທີ່ລົງກວດກາ ຕ້ອງມີບັດທີ່ອອກໃຫ້ໂດຍກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມການມອບໝາຍ;

2. ກໍລະນີ ເຈົ້າໜ້າທີ່ລົງປະຕິບັດໜ້າທີ່ ພົບການກວດທຽບຊີງຊັ່ງ ມີຄ່າຜິດດ່ຽງເກີນຄ່າອະນຸຍາດທີ່ກຳນົດໄວ້, ຕ້ອງໄດ້ເຮັດບົດບັນທຶກ ແລະ ໂຈະຊົ່ວຄາວ ຈົນກວ່າມີການສ້ອມແປງ ແລະ ກວດທຽບມີຄ່າຜິດດ່ຽງຢູ່ໃນເກນອະນຸຍາດແລ້ວ ຈຶ່ງສາມາດນຳໃຊ້ຕໍ່;

3. ກໍລະນີ ເຈົ້າໜ້າທີ່ລົງປະຕິບັດໜ້າທີ່ ພົບເຫັນຊີງຊັ່ງມີການດັດແປງຊີງຊັ່ງ, ປອມແປງເອກະສານທີ່ກ່ຽວຂ້ອງກັບຊີງຊັ່ງ ໂດຍບໍ່ໄດ້ຮັບອະນຸຍາດຕ້ອງໄດ້ເຮັດບົດບັນທຶກ, ລ໋ອກຊີງຊົ່ວຄາວ, ຖອນໃບຢັ້ງຢືນການກວດທຽບ ແລະ ໃບຢັ້ງຢືນຂຶ້ນທະບຽນຊີງຊັ່ງ, ພ້ອມທັງລາຍງານຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 8
## ສິດ ແລະ ພັນທະ ຂອງຜູ້ປະກອບການ ກ່ຽວກັບຊີງຊັ່ງ

**ມາດຕາ 33 ສິດຂອງຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ຜູ້ປະກອບການ ກ່ຽວກັບຊີງຊັ່ງ ມີສິດ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຈາກການດຳເນີນທຸລະກິດ;

2. ໂຄສະນາເຜີຍແຜ່ຊີງຊັ່ງ ກ່ຽວກັບມາດຕະຖານ ແລະ ຄຸນນະພາບຊີງຊັ່ງທຸກປະເພດ ພາຍຫຼັງໄດ້ຮັບການຢັ້ງຢືນຂຶ້ນທະບຽນ ແລະ ກວດທຽບຊີງຊັ່ງ;

3. ຮ້ອງຂໍຄວາມເປັນທຳຕໍ່ອົງການຄຸ້ມຄອງລັດທີ່ກ່ຽວຂ້ອງ ຫາກເຫັນວ່າການກວດທຽບຊີງຊັ່ງບໍ່ໄດ້ຮັບຄວາມຍຸຕິທຳ;

4. ສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ແລະ ນະຄອນ ເພື່ອກວດທຽບຊີງຊັ່ງ ທີ່ເຫັນວ່າມາດຕະຖານ ແລະ ຄຸນນະພາບຊີງຊັ່ງ ບໍ່ຖືກຕ້ອງ;

5. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ພັນທະຂອງຜູ້ປະກອບການ ກ່ຽວກັບຊີງຊັ່ງ**

ຜູ້ປະກອບການ ກ່ຽວກັບຊີງຊັ່ງ ມີພັນທະ ດັ່ງນີ້:

1. ຂຶ້ນທະບຽນຜູ້ປະກອບການ ທີ່ດຳເນີນການຜະລິດ, ນຳເຂົ້າ, ສົ່ງອອກ, ບໍລິການກວດທຽບ, ຕິດຕັ້ງ ແລະ ສ້ອມແປງ ກ່ຽວກັບຊີງຊັ່ງ;

2. ກ່ອນການຜະລິດ ຫຼື ນຳເຂົ້າຊີງຊັ່ງ ຕ້ອງໄດ້ນຳເອົາຕົ້ນແບບຊີງຊັ່ງ ໄປກວດທຽບເພື່ອຂໍການຮັບຮອງຕົ້ນແບບຊີງຊັ່ງ;

3. ນຳເອົາຕົວຢ່າງໄປກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ເພື່ອຢັ້ງຢືນຄວາມຖືກຕ້ອງສອດຄ່ອງກັບລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

4. ການຈຳໜ່າຍຊີງຊັ່ງ ຕ້ອງຜ່ານການຢັ້ງຢືນກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ທີ່ສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

5. ນຳໃຊ້ຊີງຊັ່ງທາງການຄ້າໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ໄດ້ຮັບການກວດທຽບເປັນປົກກະຕິ;

6. ຕິດຕັ້ງ ແລະ ສ້ອມແປງຊີງຊັ່ງລົດບັນທຸກ ຕ້ອງມີແມ່ແບບນ້ຳໜັກຢ່າງໜ້ອຍ ສິບ ໂຕນຂຶ້ນໄປ ເພື່ອກວດທຽບຊີງຊັ່ງ ໃຫ້ມີຄວາມຖືກຕ້ອງ ແລະ ເຊື່ອຖືໄດ້;

7. ຫຼັງຕິດຕັ້ງ ຫຼື ສ້ອມແປງຊີງຊັ່ງສຳເລັດ ຕ້ອງສະເໜີຫາກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອດຳເນີນການກວດທຽບຊີງຊັ່ງ ກ່ອນການນຳໃຊ້;

8. ຮັບຜິດຊອບຜົນເສຍຫາຍ ທີ່ເກີດຂຶ້ນຈາກຊີງຊັ່ງທີ່ບໍ່ໄດ້ຖືກຕ້ອງ;

9. ປະຕິບັດຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດ, ການຮັບຮອງຕົ້ນແບບ, ການກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ;

10. ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດວຽກງານແຕ່ລະຄັ້ງ;

11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 35 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ ກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ ຂອງເຈົ້າໜ້າທີ່ລັດ;
2. ໂຄສະນາ ແລະ ສົ່ງເສີມຊີງຊັ່ງ ທີ່ບໍ່ໄດ້ຮັບການຮັບຮອງຕົ້ນແບບ, ກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ;
3. ນຳໃຊ້ຊີງຊັ່ງທີ່ບໍ່ຜ່ານການກວດທຽບ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
4. ປອມແປງເອກະສານ ແລະ ດັດແກ້ຊີງຊັ່ງ ໂດຍບໍ່ໄດ້ຮັບອະນຸຍາດ;
5. ປົກປັງ, ເຊື່ອງອຳພາງການກະທຳ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມສຳລັບຜູ້ປະກອບການການ ກ່ຽວກັບຊີງຊັ່ງ**

ຫ້າມ ຜູ້ປະກອບການ ກ່ຽວກັບຊີງຊັ່ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ລົງໄປກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ;
2. ໂຄສະນາສົ່ງເສີມຊີງຊັ່ງ ທີ່ບໍ່ໄດ້ຮັບການກວດທຽບ ແລະ ຂຶ້ນທະບຽນ;

3. ດຳເນີນທຸລະກິດ ກ່ຽວກັບຊີງຊັ່ງ ໂດຍບໍ່ໄດ້ຮັບການອະນຸຍາດ;

4. ຜະລິດ, ຈຳໜ່າຍ ແລະ ນຳເຂົ້າຊີງຊັ່ງ ທີ່ບໍ່ໄດ້ຮັບການຮັບຮອງຕົ້ນແບບ, ກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ;

5. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ໄປກວດກາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງລົງໄປປະຕິບັດໜ້າທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ຜູ້ດຳເນີນທຸລະກິດ;
3. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
4. ກົດໜ່ວງ ຖ່ວງດຶງ ແລະ ແກ່ຍາວເວລາການພິຈາລະນາເອກະສານ;
5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງທຸລະກິດ;
6. ຂໍເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ;
7. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊີງຊັ່ງ

**ມາດຕາ 38 ການຈັດຕັ້ງປະຕິບັດການຄຸ້ມຄອງວຽກງານຊີງຊັ່ງ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊີງຊັ່ງ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແບ່ງອອກເປັນ ສາມ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມມາດຕະຖານ ແລະ ວັດແທກ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ແລະ ນະຄອນ;

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

3. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອໄປກວດທຽບຄວາມຖືກຕ້ອງຊັດເຈນຊີງຊັ່ງ;

4. ສຸ່ມເກັບເອົາຕົວຢ່າງຂອງຊີງຊັ່ງ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ຫຼື ຊີງຊັ່ງທີ່ຕິດຕັ້ງ ແລະ ນຳໃຊ້ໄປແລ້ວ ເພື່ອກວດທຽບໃຫ້ສອດຄ່ອງກັບລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

5. ອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ;

6. ອອກໃບຮັບຮອງຕົ້ນແບບຊີງຊັ່ງ ທີ່ຜະລິດ, ນຳເຂົ້າ ແລະ ສົ່ງອອກ;

7. ອອກໃບຢັ້ງຢືນກວດທຽບຊີງຊັ່ງ ແລະ ໃບຢັ້ງຢືນຂຶ້ນທະບຽນຊີງຊັ່ງ;

8. ສັ່ງໂຈະຊົ່ວຄາວ ການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ນຳໃຊ້ຊີງຊັ່ງ ພາຍຫຼັງການກວດທຽບຊີງຊັ່ງເຫັນວ່າບໍ່ສອດຄ່ອງກັບລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

9. ຊຸກຍູ້ ແລະ ສົ່ງເສີມວິທະຍາສາດ ແລະ ເຕັກໂນໂລຊີ ກ່ຽວກັບຊີງຊັ່ງ ເພື່ອປະກອບສ່ວນເຂົ້າໃນການຜະລິດ ແລະ ບໍລິການ;

10. ຄຸ້ມຄອງລະບົບການກວດທຽບຄວາມຖືກຕ້ອງ ແລະ ຊັດເຈນຂອງຊີງຊັ່ງ ໃຫ້ສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

11. ຮັບ ແລະ ພິຈາລະນາແກ້ໄຂຄໍາຮ້ອງ ແລະ ຄໍາສະເໜີ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ;

12. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊີງຊັ່ງ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອໄປກວດທຽບຄວາມຖືກຕ້ອງຊັດເຈນຊີງຊັ່ງ ຕາມການແບ່ງຂັ້ນຄຸ້ມຄອງ.

3. ກວດທຽບ ແລະ ຢັ້ງຢືນການຊີງຊັ່ງ ປະຈໍາປີ ພາຍຫຼັງໄດ້ຮັບການກວດທຽບ ແລະຂຶ້ນທະບຽນຢ່າງຖືກຕ້ອງສອດຄ່ອງກັບລະບຽບເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ ຕາມການແບ່ງຂັ້ນຄຸ້ມຄອງ;

4. ຮັບຄໍາຮ້ອງຂໍຂຶ້ນທະບຽນຜູ້ປະກອບການ ກ່ຽວກັບຊີງຊັ່ງ, ຂໍຮັບຮອງຕົ້ນແບບ, ຂໍກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງແລ້ວ ນໍາສົ່ງໃຫ້ກົມມາດຕະຖານ ແລະ ວັດແທກ ເພື່ອພິຈາລະນາ;

5. ດໍາເນີນການກວດກາ, ຕິດຕາມ ແລະ ກວດທຽບຊີງຊັ່ງ ຢູ່ຕາມທ້ອງຕະຫຼາດ, ສະຖານທີ່ບໍລິການ ແລະ ຫ້າງຮ້ານຈໍາໜ່າຍ;

6. ແນະນໍາຜູ້ຜະລິດ, ນໍາເຂົ້າ, ສົ່ງອອກ ແລະ ນໍາໃຊ້ ຊີງຊັ່ງກ່ຽວກັບຂັ້ນຕອນການແຈ້ງເອກະສານຂໍອະນຸຍາດໃນການຂຶ້ນທະບຽນ ແລະ ກວດທຽບຊີງຊັ່ງ;

7. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດຄືນຊີງຊັ່ງໃຫ້ສອດຄ່ອງລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

8. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆໃຫ້ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ;

9. ຮັບ ແລະ ພິຈາລະນາແກ້ໄຂຄໍາຮ້ອງ ແລະ ຄໍາສະເໜີ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ;

10. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊີງຊັ່ງ ໃຫ້ກົມມາດຕະຖານ ແລະ ວັດແທກປະຈໍາ ເດືອນ ແລະ ປີ ຢ່າງເປັນປົກກະຕິ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ ແລະ ນະຄອນ**

ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງຊີງຊັ່ງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ, ນະຄອນຂອງຕົນ;

2. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອໄປກວດທຽບຄວາມຖືກຕ້ອງຊັດເຈນຊີງຊັ່ງ ຕາມການແບ່ງຂັ້ນຄຸ້ມຄອງ;

3. ກວດທຽບຊີງຊັ່ງ ຕາມທ້ອງຕະຫຼາດ ປະຈໍາປີ ພາຍຫຼັງໄດ້ຮັບການກວດທຽບ ແລະ ຂຶ້ນທະບຽນຢ່າງຖືກຕ້ອງສອດຄ່ອງກັບລະບຽບເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;

4. ແນະນໍາຜູ້ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ຊີງຊັ່ງ ກ່ຽວກັບຂັ້ນຕອນການສະເໜີຂໍກວດທຽບ ແລະ ຂຶ້ນທະບຽນຊີງຊັ່ງ;

5. ດໍາເນີນການຕິດຕາມ ແລະ ກວດກາຊີງຊັ່ງ ຢູ່ຕາມທ້ອງຕະຫຼາດ, ສະຖານທີ່ບໍລິການ ແລະ ຈໍາໜ່າຍຕາມການມອບໝາຍ;

6. ຮັບຄຳຮ້ອງຂໍຮັບຮອງຕົ້ນແບບ, ກວດທຽບ ແລະ ຂຶ້ນທະບຽນຊິງຊັ່ງແລ້ວ ນຳສົ່ງ ໃຫ້ກົມມາດຕະຖານ ແລະ ວັດແທກ ເພື່ອພິຈາລະນາ;

7. ເກັບກຳຂໍ້ມູນຊິງຊັ່ງ ເພື່ອຮັກສາ ແລະ ສະໜອງໃຫ້ພາກສ່ວນກ່ຽວຂ້ອງ;

8. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊິງຊັ່ງ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ປະຈຳເດືອນ, ງວດ ແລະ ປີ ເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 43 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຊິງຊັ່ງທຸກປະເພດ ຢູ່ ສປປລາວ ສະບັບເລກທີ 0544/ກອຕ ລົງວັນທີ 16 ພຶດສະພາ 2017.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ